# ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ

*ທຳມະຊາດ ວົງຄຳຮົ່[1], ອິນທະແສງ ອິນທະລາຊາ[2], ສີສະໄໝ ດວງມະນີ[3], ບຸນຈັນ ວົງທອງຄຳ[4]*

*ນັກສຶກສາປະລິນຍາໂທ ຮຸ່ນ I, ສາຂາ ວິທະຍາສາດການສຶກສາ, ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

## ບົດຄັດຫຍໍ້

ການຄົ້ນຄວ້າໃນຄັ້ງນີ້ໄດ້ສຶກສາການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງມີຈຸດປະສົງເພື່ອ: 1)ສຶກສາສະພາບບັນຫາ ການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ; 2)ເພື່ອສຶກສາລະດັບການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາ;3)ເພື່ອສຶກສາແນວທາງ ການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ; 4)ເພື່ອປະເມີນແນວທາງ ການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນປະຖົມສາມັນສຶກສາ ຢູ່ເມືອງ 3 ສ້າງ ຂະແໜງການສຶກສາ ແຂວງເຊກອງ. ເຊິ່ງເປັນການວິໄຈແບບປະສົມປະສານ (Mixed Methods) ຄືການວິໄຈແບບຄຸນນະພາບ ແລະການວິໄຈແບບປະລິມານ, ເຊິ່ງມີກຸ່ມຕົວຢ່າງໃນການສຶກສາຄົ້ນຄວ້າໃນຄັ້ງນີ້ປະກອບມີ ຜູ້ບໍລິຫານການສຶກສາຂັ້ນຫ້ອງການ;ປະທານກຸ່ມໂຮງຮຽນປະຖົມສຶກສາ;ຜູ້ອຳນວຍການໂຮງຮຽນທີ່ເປັນສະມາຊິກກຸ່ມ;ປະທານຄະນະພັດທະນາການສຶກສາຂັ້ນບ້ານ;ອົງການຈັດຕັ້ງມະຫາຊົນຂັ້ນບ້ານ ແລະສະມາຄົມພໍ່ແມ່ນັກຮຽນ/ຕາງໜ້າພໍ່ແມ່ນັກຮຽນ ໃນ 3 ເມືອງ (ລະມາມ,ກະລຶມ, ດາກຈຶງ) ມີຈຳນວນກຸ່ມຕົວຢ່າງທັງໝົດ: 354 ຄົນ, ໂດຍໃຊ້ວິທີການເລືອກກຸ່ມຕົວຢ່າງແບບວິທີເຈາະຈົງ (Purposive Sampling), ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ປະກອບມີ ແບບສຳພາດແບບເຄິ່ງໂຄງສ້າງ;ແບບສອບຖາມ;ແບບປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຜົນການວິໄຈພົບວ່າ ສັງຄົມ ຫຼື ຊຸມຊົນ ຍັງບໍ່ທັນໄດ້ເຂົ້າມາມີສ່ວນຮ່ວມໃນການພັດທະນາເທົ່າທີ່ຄວນ, ການພັດທະ ນາໂຮງຮຽນທີ່ເປັນສະມາຊິກກຸ່ມສ່ວນຫຼາຍແມ່ນຍັງເອື້ອຍອີງໃສ່ແຕ່ງົບປະມານ ຂອງພາກລັດ, ການເຂົ້າມາມີສ່ວນຮ່ວມໃນການຕິດຕາມ, ການປະເມີນການປະຕິບັດໜ້າທີ່ຂອງຜູ້ບໍລິຫານ ໂຮງຮຽນ,ການ

ສິດສອນຂອງຄູ ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ເຮັດໃຫ້ການວາງແຜນພັດທະນາກຸ່ມໂຮງ ຮຽນແມ່ນບໍ່ມີພາກສ່ວນຊຸມຊົນເຂົ້າມາມີສ່ວນຮ່ວມ, ການນຳໃຊ້ເງິນບໍລິຫານໂຮງຮຽນທີ່ໄດ້ຮັບການແບ່ງປັນຈາກ ກະຊວງສຶກສາທິການແລະ ກິລາ ແມ່ນໃຊ້ຈ່າຍບໍ່ຖືກຕ້ອງຕາມຄຳແນະນຳ, ການກວດກາບໍ່ມີຄວາມໂປ່ງໃສ ແລະ ມີການສະຫຼຸບການໃຊ້ຈ່າຍບໍ່ມີຄວາມຖືກຕ້ອງຕາມລະບຽບຫຼັກການຂອງການເງິນວາງອອກ.

ຜົນການສຶກສາລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ ທັງ 5 ດ້ານໂດຍລວມຢູ່ໃນລະດັບຫຼາຍ. ຖ້າຈຳແນກເປັນດ້ານສັງເກດເຫັນວ່າ ດ້ານການເຂົ້າຮ່ວມກິດຈະກຳເຄື່ອນໄຫວຕ່າງໆຂອງ

[1] *ນັກສຶກສາປະລິນຍາໂທ , ສາຂາ ວິທະຍາສາດການສຶກສາ, ຄະນະສຶກສາສາດ ມະຫາວິທະຍາໄລຈາປາສັກ*

[2] *ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລຈຳປາສັກ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

[4] *ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລຈຳປາສັກ*

ໂຮງຮຽນ ມີລະດັບຫຼາຍກວ່າໝູ່, ຮອງລົງມາແມ່ນດ້ານການມີສ່ວນຮ່ວມສົ່ງເສີມວຽກງານວິຊາການ. ສ່ວນດ້ານທີ່ມີລະດັບຄວາມຄິດເຫັນ ນ້ອຍສຸດແມ່ນດ້ານການບໍລິຫານງົບປະມານ.

ຜົນການປະເມີນແນວທາງການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນກຸ່ມໂຮງຮຽນປະຖົມສາມັນສຶກສາ ຢູ່ເມືອງ 3 ສ້າງ ຂະແໜງການສຶກສາ ແຂວງເຊກອງ ໂດຍລວມມີຄວາມເໝາະສົມ ໃນລະດັບດີ ຫຼາຍ. ສ່ວນຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາເປັນແຕ່ລະແນວທາງ ພົບວ່າ: ຄວາມ ເໝາະສົມໃນລະດັບຫຼາຍ ແມ່ນແນວທາງທີ 3 ການເຂົ້າຮ່ວມກິດຈະກຳເຄື່ອນໄຫວຕ່າງໆຂອງໂຮງຮຽນ ແລະ ມີຄວາມເປັນໄປໄດ້ ໃນລະດັບຫຼາຍ ແມ່ນແນວທາງທີ 4 ການບໍລິຫານງົບປະມານ.

**ຄຳສຳຄັນ:** ການມີສ່ວນຮ່ວມຂອງຊຸມຊົນ, ການພັດທະນາກຸ່ມໂຮງຮຽນ, ກຸ່ມໂຮງຮຽນ

# The Community Participation in the Development of Primary School Groups: A Case Study of Primary School Groups in District 3 of the Education and Sports Sector in Sekong province

*thammasad VONGKHAMHOR, Master of Education Faculty, Majoring in Educational Science,*

**Abstract**

The purpose of this research is to: 1) study the problem of community participation in school development, a case study of a group of elementary schools in district 3, creating the education sector in Sekong province; 2) To study the level of community participation in the development of the school, a group of primary schools in District 3 to create the education sector in Sekong Province; 3) To study the way of community participation in the development school group of general education primary schools in District 3 created the education sector in Sekong Province; 4) To evaluate the way of community participation in the development of the school group of elementary schools in district 3 to create the education sector in Sekong province. The sample group in this study includes office-level education administrators; presidents of primary school groups; principals of schools that are members of the group; presidents of village-level education development committees; village-level mass organizations and parent-student associations/representatives of student parents in 3 districts. the total number of sample groups: 354 people. Using a Purposive Sampling, the tools used in this research include a semi-structured interview; a questionnaire; assessment of appropriateness and possibility. The research found that: Society or the community has not been involved in the development as it should be, the development of the schools that are members of the group is still dependent on the budget of the public sector, which can be seen that there are still many groups of schools whose school environment has not been completed, is not suitable for teaching and learning, the school building is still very dirty, the classrooms are cramped and crowded without light, there are no decorative trees around the school, the equipment used for student activities is not enough to meet the needs;

Participation in the monitoring, evaluation of the performance of school administrators, teaching of teachers has not yet been implemented, so the development planning of the school group is not participated by the community. The results of the community participation assessment in the development of the primary school group in district 3 to create the education sector in Sekong province as a whole are very appropriate at a very good level. The overall probability is very high. When considering each approach, it is found that: diversity at a high level is the 3rd approach, participating in various activities of the school and having a high level of possibility is the 4th approach, budget management.

**Keyword:** Community participation, school group development, school group

**1. ພາກສະເໜີ**

ຊຸມຊົນເປັນຜູ້ມີບົດບາດສຳຄັນຢ່າງຫຍິ່ງໃນການຈັດການສຶກສາ ແລະ ຂະບວນການຮຽນຮູ້, ການມີສ່ວນຮ່ວມ ຂອງຊຸມຊົນ ສາມາດມີສ່ວນຮ່ວມໃນການສົ່ງເສີມພັດທະນາຂະແໜງການສຶກສາ ແລະ ກິລາ (UNICEF, 1992). ການມີສ່ວນຮ່ວມຂອງຊຸມຊົນເປັນແນວຄິດທີ່ພະຍາຍາມນຳຜູ້ມີສ່ວນໄດ້ສ່ວນເສຍທີ່ແຕກຕ່າງກັນ ມາຮ່ວມກັນທັງໝົດ ເພື່ອແກ້ໄຂບັນຫາ ແລະ ການຕັດສິນໃຈ (Talbot and Verrinder, 2005). ການມີສ່ວນຮ່ວມຂອງຊຸມຊົນຖືໄດ້ວ່າຈຳເປັນຕໍ່ການສະໜັບສະໜູນຈາກຊຸມຊົນໃນການວາງແຜນ ແລະ ພັດທະນາການສຶກສາ (Cole, 2007). ການມີສ່ວນຮ່ວມ ຂອງຊຸມຊົນແມ່ນການມີສ່ວນຮ່ວມຂອງປະຊາຊົນໃນກິດຈະກຳພາຍໃນລະບົບການສຶກສາ ທີ່ມີບົດບາດສຳຄັນແລະຍືນຍົງ ໃນການສົ່ງເສີມຄຸນນະພາບຊີວິດ (Putnam, 2000). ການມີສ່ວນຮ່ວມຂອງຊຸມຊົນເປັນຂະບວນການພັດທະນາການສຶກສາ ສາມາດສະໜັບສະໜູນແລະຖືຮັກສາວັດທະນະທຳປະເພນີຄວາມຮູ້ ແລະ ທັກສະໃນທ້ອງຖິ່ນ ສ້າງຄວາມພາກພູມໃຈໃນມໍລະດົກຂອງຊຸມຊົນ (Lacy et al., 2002).ການມີສ່ວນຮ່ວມຂອງຊຸມຊົນເປັນໜຶ່ງໃນກົນໄກໃນການສົ່ງເສີມໃຫ້ປະຊາຊົນມີສ່ວນຮ່ວມໃນການພັດທະນາການສຶກສາ ເປີດຕົວເປັນແນວຄິດສຳຄັນຂອງການພັດທະນາ ຖືເປັນແນວຄິດຫຼັກຂອງການພັດທະນາ ການມີສ່ວນຮ່ວມທີ່ເພີ່ມຂຶ້ນເປັນວິທີການເພື່ອໃຫ້ເກີດການພັດທະນາເພື່ອແກ້ໄຂບັນຫາການສຶກສາ (Aref et al., 2009; Lasker, Weiss, and Miller, 2001).

ກະຊວງສຶກສາທິການແລະກິລາໄດ້ມີນະໂຍບາຍສະໜັບສະໜູນການກະຈາຍອຳນາດໄປສູ່ທ້ອງຖິ່ນແລະໃຫ້ຊຸມຊົນເຂົ້າມາມີສ່ວນຮ່ວມໃນການຈັດການສຶກສາໃຫ້ມີປະສິດທິພາບແລະສອດຄ່ອງກັບຄວາມຕ້ອງການ, ການມີສ່ວນຮ່ວມ ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນໃດໜຶ່ງຜູ້ທີ່ມີສ່ວນໄດ້ສ່ວນເສຍ ຫຼື ມີສ່ວນ ກ່ຽວຂ້ອງ ຮ່ວມດຳເນີນກິດຈະກຳດ້ວຍວິທີການໃດໜຶ່ງຮ່ວມກັນ ເພື່ອໃຫ້ບັນລຸຕາມຈຸດປະສົງເປົ້າໝາຍທີ່ກຳ ນົດໄວ້ໂດຍກົງ ແລະ ທາງອ້ອມດ້ວຍການຮ່ວມມື, ຮ່ວມໃຈປະສານງານ ແລະ ມີຄວາມຮັບຜິດຊອບຮ່ວມກັນ. ການມີສ່ວນຮ່ວມມີຄວາມສຳຄັນ ແລະ ຈຳເປັນທີ່ສຸດ ເພາະວ່າ ການທີ່ຫຼາຍຄົນໄດ້ນຳເອົາບົດຮຽນ, ເອົາທັກສະ ແລະ ປະສົບການມາປະສົມປະສານກັນ ຫຼື ເອີ້ນວ່າ “ແຊຣໄອເດຍ” (Share idea) ຮ່ວມກັນຈະ ເຮັດໃຫ້ເກີດມີຜົນດີຫຼາຍຢ່າງເຊັ່ນວ່າ ການຮ່ວມສະແດງຄວາມຄິດເຫັນ, ການຮ່ວມກັນວາງແຜນ, ການຮ່ວມກັນປະຕິບັດ ແລະ ການຮ່ວມກັນຕັດສິນໃຈ ເຊິ່ງຈະເຮັດໃຫ້ເກີດຄວາມຮູ້ສຶກຜູກພັນຮ່ວມກັນ ແລ້ວຈະເປັນຜົນໃຫ້ເກີດຂໍ້ຜູກມັດ ຫຼື ສິ່ງທີ່ຕົກລົງໃຈຮ່ວມກັນດຳເນີນວຽກງານ. ນອກນັ້ນ ການມີສ່ວນຮ່ວມຍັງ ປຽບເໝືອນການເຮັດວຽກຢ່າງມີຄວາມສາມັກຄີ, ມີຄວາມເປັນປະຊາທິປະໄຕ, ຈະຊ່ວຍຫຼຸດຜ່ອນການ ຕໍ່ຕ້ານຢູ່ໃນອົງກອນ ຫຼື ໂຮງຮຽນ. ພ້ອມກັນນັ້ນ ຍັງເປັນຜົນດີຕໍ່ການປະຕິບັດວຽກງານສຳເລັດຢ່າງມີ ປະສິດທິພາບ. (ສົມພອນ ວິໄລຈິດ, 2013, pp. 3-4)

ມາຮອດປີ 2012 ມະຕິຂອງກົມການເມືອງສູນກາງພັກ, ສະບັບເລກທີ 03 ລົງວັນທີ 15 ກຸມພາ 2012 ໄດ້ ກຳນົດນະໂຍບາຍວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ, ຊຶ່ງໃນຂະແໜງການສຶກສາ ແລະ ກິລາ ກໍ່ແມ່ນໂຮງຮຽນເປັນຫົວໜ່ວຍພັດທະນາ, ຕໍ່ຈາກນັ້ນ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໄດ້ອອກຄຳສັ່ງ 2 ສະບັບ ຄື: ສະບັບເລກທີ 1182 ແລະ 1183 ກ່ຽວກັບການແບ່ງໜ້າທີ່ລະຫວ່າງອົງການຄຸ້ມຄອງການສຶກສາແຕ່ລະຂັ້ນ (ລວມທັງຂັ້ນໂຮງຮຽນ) ແລະ ການທົດລອງຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວຢູ່ໃນຂະແໜງການ

ສຶກສາ ໃນປີ 2013, ກະຊວງ ສຶກສາທິການ ແລະ ກິລາ ໄດ້ຮັບຮອງຕົວຊີ້ວັດມາດຕະຖານຄຸນນະພາບການສຶກສາຢ່າງເປັນທາງການ ແລະ ໃນປີ 2015 ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງໃໝ່ ປີ 2015) ມາດຕາ 82 ໄດ້ກຳນົດໃຫ້ສະຖານການສຶກສາ ຫຼື ໂຮງຮຽນເປັນຫົວໜ່ວຍຄຸ້ມຄອງການສຶກສາຂັ້ນທີ 4 (ຂັ້ນຮາກຖານ). ພ້ອມກັນນັ້ນ, ມາດຕາ 88 ຂອງກົດໝາຍສະບັບດັ່ງກ່າວກໍ່ໄດ້ກຳນົດສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ຂອງສະຖານການສຶກສາ, ເຊິ່ງເນື້ອໃນກົດໝາຍສະບັບດັ່ງກ່າວ ເຫັນວ່າມີຄວາມສອດຄ່ອງກັບແນວຄິດ ຂອງການຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ (SBM) ເປັນຢ່າງດີ. ການຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ ແມ່ນໝາຍເຖິງຄວາມເປັນເຈົ້າການຂອງໂຮງຮຽນຮ່ວມກັບຊຸມຊົນໃນການພັດທະນາໂຮງຮຽນ ເພື່ອປັບປຸງຜົນການຮຽນ ຂອງນັກຮຽນຕາມຕົວຊີ້ວັດຂອງມາດຖານຄຸນນະພາບການສຶກສາ ແລະ ລັດຖະບານສາມາດເສີມຂະຫຍາຍຫົວຄິດປະດິດສ້າງ ຂອງທ້ອງຖິ່ນເຂົ້າໃນການພັດທະນາໂຮງຮຽນໄດ້. (ກະຊວງສຶກສາທິການແລະກິລາ, 2021, pp. 5-6)

ເຊິ່ງສອດຄ່ອງກັບແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ 9 2021 - 2025 ທີ່ໄດ້ກຳນົດຜົນໄດ້ຮັບລະດັບກາງທີ 1 ທີ່ໄດ້ວາງໄວ້ວ່າໂຄງປະກອບການຈັດຕັ້ງຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ ມີຄວາມເຂັ້ມແຂງ ເພື່ອ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາການສຶກສາ ແລະ ກິລາ ໃຫ້ມີປະສິດຕິພາບລວມທັງການຈັດຕັ້ງນະໂຍບາຍການບໍລິຫານທີ່ອີງໃສ່ໂຮງຮຽນເປັນຫຼັກ ແລະ ບົດບາດ ຂອງ “ຄພສບ” ຕ້ອງມີຄວາມເຂັ້ມແຂງ (ພາກທີ I ຜົນໄດ້ຮັບທີ 6, ຜົນຮັບລະດັບກາງ 6.1) ແລະ ຢູ່ໃນຍຸດທະສາດທີ 4 ໄດ້ລະບຸໄວ້ວ່າ ປັບປຸງການມີສ່ວນຮ່ວມຂອງຊຸມຊົນໃນຂັ້ນຕອນການຄຸ້ມຄອງໂຮງຮຽນ ເຊິ່ງວຽກຈຸດສຸມແມ່ນປັບປຸງໜ້າວຽກຂອງ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອໃຫ້ປະກອບມີໜ້າວຽກການສະໜັບສະໜູນອຳນວຍການໂຮງຮຽນໃນການພັດທະນາ ແລະ ການຈັດຕັ້ງປະຕິບັດແຜນພັດທະນາໂຮງຮຽນ ໂດຍອີງໃສ່ຜົນການປະເມີນມາດຕະຖານຂັ້ນພື້ນຖານຂອງຄຸນນະພາບການສຶກສາ (ກະຊວງສຶກສາທິການແລະກິລາ, 2020, p. 198)

ແຂວງເຊກອງເປັນແຂວງໜຶ່ງ ທີ່ນອນຢູ່ໃນແຂວງສາມສ້າງຂອງກະຊວງສຶກສາທິການ ແລະກິລາ, ເຊິ່ງມີ 3 ຕົວເມືອງເປົ້າໝາຍ ຄື: ເມືອງດາກຈຶງ, ເມືອງກະລຶມ ແລະ ເມືອງລະມາມ ມີກຸ່ມໂຮງຮຽນ 3 ສ້າງປະຖົມສາມັນສຶກສາທັງໝົດ 25 ກຸ່ມໂຮງຮຽນ ທີ່ເນັ້ນໃສ່ການບໍລິຫານຄຸ້ມຄອງ ໂດຍນຳໃຊ້ຊັບພະຍາກອນກຸ່ມຮ່ວມກັນ ແລະຍົກສູງໃຫ້ຊຸມຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາໂຮງຮຽນ ໂດຍສະເພາະແມ່ນການປະກອບສ່ວນໃນການຊຸກຍູ້ລູກຫຼານເຂົ້າຮຽນ,ສະໜອງອຸປະກອນການຮຽນໃຫ້ແກ່ລູກຫຼານ, ການປະກອບສ່ວນແຮງງານແລະງົບປະມານ ເຂົ້າໃນການບຳລຸງບູລະນະ ປັບປຸງອາຄານສະຖານທີ່ ສະພາບແວດລ້ອມໃນໂຮງຮຽນແລະເບິ່ງແຍງຊີວິດການເປັນຢູ່ຂອງຄູສອນພາຍໃນບ້ານ. ເຖິງແນວໃດກໍດີໃນໄລຍະຜ່ານມາການປະຕິບັດບົດບາດພາລະໜ້າທີ່ຂອງຄະນະພັດທະນາການສຶກສາຂັ້ນບ້ານແລະຊຸມຊົນ ກໍ່ຍັງພົບບັນຫາເຊັ່ນ: ຄະນະພັດທະນາ ການສຶກສາຂັ້ນບ້ານບາງບ້ານຍັງບໍ່ທັນເຂົ້າໃຈຕໍ່ບົດບາດ ໜ້າທີ່ຂອງຕົນ, ມີການແບ່ງໜ້າທີ່ບໍ່ຖືກຕາມປື້ມຄູ່ມືທີ່ ກຳນົດໄວ້, ບໍ່ເຂົ້າໃຈໃນການວາງແຜນພັດທະນາການສຶກ ສາຂັ້ນບ້ານ, ຊຸມຊົນມີສ່ວນຮ່ວມໃນ ການພັດທະນາໂຮງຮຽນຍັງບໍ່ທັນໄດ້ດີ ເປັນຕົ້ນແມ່ນການຊຸກຍູກລູກຫຼານເຂົ້າຮຽນຍັງບໍ່ເປັນຂະບວນຟົດຟື້ນ, ຈາກນັ້ນກໍ່ແມ່ນວຽກງານປັບປຸງບູລະນະສ້ອມແປງ ແລະປົກປັກຮັກສາໂຮງຮຽນກໍ່ຍັງບໍ່ທັນໄດ້ດີ ເຊິ່ງເຫັນໄດ້ວ່າໂຮງຮຽນສ່ວນຫຼາຍ ໃນຊ່ວງ

ໄລຍະພັກສິ້ນປີຮຽນ ແມ່ນມີຄວາມເປິ້ເປື້ອນ ເຕັມໄປດ້ວຍມູນສັດລ້ຽງ ຂອງພໍ່ແມ່ປະຊາຊົນພາຍໃນບ້ານ, ອາຄານຮຽນຖືກງັດແງະ ແລະຊັບສິນໃນໂຮງຮຽນຖືກທຳລາຍມ້າງເພ້ ເປັນຕົ້ນ.

ສິ່ງທີ່ກ່າວມາຂ້າງເທິງນັ້ນ, ສະແດງໃຫ້ເຫັນວ່າການປະຕິບັດບົດບາດໜ້າທີ່ຂອງຄະນະພັດທະນາການສຶກສາຂັ້ນ ບ້ານເປັນປັດໄຈສໍາຄັນຫຼັກຢູ່ໃນຂັ້ນຮາກຖານທ້ອງຖິ່ນ ເພື່ອເປັນການຍົກລະດັບທາງດ້ານການບໍລິຫານ ແລະ ການຄຸ້ມຄອງການສຶກສາ, ການແກ້ໄຂບັນຫາສິ່ງຕ່າງໆ ທີ່ເປັນອຸປະສັກຕໍ່ກັບວຽກງານຂອງຂະແໜງການສຶກສາ ແລະ ກິລາ, ການພັດທະນາຊັບພະຍາກອນມະນຸດໃຫ້ ມີການຫັນປ່ຽນທີ່ດີຂຶ້ນ, ທັງຫມົດ ທີ່ໄດ້ກ່າວມາຂ້າງເທິງນັ້ນ ແມ່ນສະແດງໃຫ້ເຫັນເຖິງສະພາບບັນຫາໃນການຈັດຕັ້ງປະຕິບັດແຜນພັດທະນາໂຮງຮຽນຢູ່ຂັ້ນຮາກຖານທ້ອງຖິ່ນ ແລະຕ້ອງໄດ້ສູ້ຊົນ ຈັດຕັ້ງປະຕິບັດໃຫ້ບັນລຸ ບັນດາ 15 ຄາດໝາຍທີ່ສະພາປະຊາຊົນຂັ້ນແຂວງມອບໝາຍຕາມແຜນທີ່ວາງໄວ້ (ພະແນກສຶກສາທິການແລະກິລາ ແຂວງເຊກອງ, 2020, p. 19)

ຈາກຄວາມສໍາຄັນ ແລະ ສະພາບບັນຫາທີ່ກ່າວມາຂ່າງເທິງນັ້ນ, ຜູ້ວິໄຈ ຈິ່ງມີຄວາມສົນໃຈທີ່ຈະສຶກສາຫົວຂໍ້: ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ. ເພື່ອນໍາເອົາຜົນທີ່ໄດ້ຈາກ ການວິໄຈ ມາເປັນຂໍ້ມູນໃນການວາງແຜນພັດທະນາຈັດການສຶກສາທີ່ເນັ້ນການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາໂຮງຮຽນ, ເປັນການສ້າງຄຸນນະພາບ, ປະສິດທິພາບຂອງໂຮງຮຽນ, ເຮັດໃຫ້ກຸ່ມໂຮງຮຽນກາຍເປັນໂຮງຮຽນຕົວແບບ, ໂຮງຮຽນຄຸນນະພາບ , ຮັບໃຊ້ຊຸມຊົນ, ເຊິ່ງເກີດປະໂຫຍດໂດຍກົງກັບຜູ້ຮຽນພ້ອມທັງ ສາມາດບັນລຸໄດ້ບັນດາຄາດໝາຍທີ່ສະພາແຫ່ງຊາດຮັບຮອງ ຮອດປີ 2025 ແລະ ມີຄວາມຍືນຍົງໃນການບໍລິຫານຄຸ້ມຄອງ.

## 2. ວິທີການຄົ້ນຄວ້າ

ການວິໄຈຄັ້ງນີ້ ມີຈຸດປະສົງຫຼັກ ເພື່ອສຶກສາການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ, ເຊິ່ງເປັນການວິໄຈແບບປະສົມປະສານ (Mixed Methods) ຄືເລີ່ມຕົ້ນດ້ວຍການວິໄຈແບບຄຸນນະພາບ (Qualitative Research) ໂດຍໃຊ້ການສໍາພາດແບບເຄິ່ງໂຄງສ້າງ ເພື່ອຫາລາຍລະອຽດ ຂອງຂໍ້ມູນ ເບື້ອງຕົ້ນກ່ຽວກັບສະພາບບັນຫາການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ ແລະ ນໍາໃຊ້ການວິໄຈແບບປະລິມານ (Quantitative Research) ໂດຍໃຊ້ແບບສອບຖາມ ເພື່ອວິເຄາະຫາສາລະດັບຄວາມຄິດເຫັນ, ແນວທາງ ແລະ ການປະເມີນກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ

2.1. ເຄື່ອງມືທີ່ໃຊ້ໃນການສຶກສາ.

ເຄື່ອງມືທີ່ໃຊ້ໃນການສຶກສາຄັ້ງນີ້ ປະກອບມີ 3 ແບບ ໄດ້ແກ່:

2.1.1. ແບບສໍາພາດແບບເຄິ່ງໂຄງສ້າງ.

ເປັນແບບສໍາພາດທີ່ຜູ້ວິໄຈ ໄດ້ສ້າງຂໍ້ຄໍາຖາມໄວ້ກ່ອນລ່ວງໜ້າຈໍານວນ 10 ຄໍາຖາມ ເພື່ອນໍາໄປສໍາພາດຫົວໜ້າຫ້ອງ ການສຶກສາທິ ການ ແລະ ກິລາ, ຫົວໜ້າໜ່ວຍງານພາຍໃນຫ້ອງການສຶກສາທິການ ແລະ ກິລາ, ປະທານກຸ່ມໂຮງຮຽນ ປະຖົມສຶກສາ, ຜູ້ອໍານວຍການໂຮງຮຽນປະຖົມສຶກສາທີ່ເປັນສະມາຊິກ

ກຸ່ມ,ຄະນະພັດທະນາການສຶກສາຂັ້ນບ້ານ, ອົງການຈັດຕັ້ງມະຫາ ຊົນຂັ້ນບ້ານ ແລະ ສະມາຄົມພໍ່ແມ່ນັກຮຽນ ກ່ຽວກັບສະພາບບັນຫາການມີສ່ວນຮ່ວມໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ ຢູ່ເມືອງ 3 ສ້າງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ.

2.1.2. ແບບສອບຖາມ.

ແບບສອບຖາມເປັນເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນກ່ຽວລະດັບການມີສ່ວນຮ່ວມຂອງຊຸມຊົນໃນການ ພັດທະນາໂຮງຮຽນ ກຸ່ມໂຮງຮຽນຊັ້ນປະຖົມສາມັນສຶກສາ ແຂວງເຊກອງ, ເປັນແບບສອບຖາມແບບມາດຕາສ່ວນປະມານຄ່າ (Rating Scale) ທີ່ແບ່ງອອກເປັນ 5 ລະດັບ ຕາມວິທີຂອງເລນຊິດ (Rensis Likert Method), ເຊິ່ງປະກອບມີ 3 ຕອນ ດັ່ງນີ້:ຕອນທີ 1: ເປັນແບບສອບຖາມທີ່ກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ. ຕອນທີ 2: ລະດັບຄວາມຄິດເຫັນກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນຊັ້ນປະຖົມສາມັນສຶກສາ, ເປັນແບບເລືອກຕອບ ມີຈຳນວນ 43 ຂໍ້ຄຳຖາມ ເຊິ່ງແບບສອບຖາມມີລັກສະນະເປັນແບບປະມານຄ່າ (Rating scale). ໂດຍໃຊ້ເກນກຳນົດນ້ຳໜັກຄະແນນ ແລະ ມາດຕາສ່ວນປະເມີນຄ່າ 5 ລະດັບ, (ບຸນຊົມ ສີສະອາດ, 1992: 4). ( 5= ມີສ່ວນຮ່ວມລະດັບຫລາຍທີ່ສຸດ, 4= ມີສ່ວນຮ່ວມລະດັບຫລາຍ,3=ມີສ່ວນຮ່ວມລະດັບປານກາງ, 2= ມີສ່ວນຮ່ວມ ລະດັບນ້ອຍ, 1= ມີສ່ວນຮ່ວມ ລະດັບນ້ອຍທີ່ສຸດ ), ຕອນທີ 3: ເປັນຄຳຖາມປາຍເປີດ ເພື່ອຖາມກ່ຽວກັບຄວາມຄິດເຫັນເພີ່ມເຕີມການມີສ່ວນຮ່ວມໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ ຢູ່ເມືອງ 3 ສ້າງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ.

2.1.3. ແບບປະເມີນ ຄວາມເໝາະສົມ ແລະ ຄວາມເປັນໄປໄດ້

ເປັນແບບປະເມີນກ່ຽວກັບແນວທາງການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງ
ຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ ເປັນແບບມາດຕາສ່ວນ (Rating Scale) ມີ 5 ລະດັບ ຈຳນວນ 43 ຂໍ້ຄຳຖາມ ເພື່ອນຳໄປ
ປະເມີນຜູ້ບໍລິຫານໂຮງຮຽນ ໃນກຸ່ມໂຮງຮຽນຕົວແບບຂອງແຂວງເຊກອງ ຈຳນວນ 7 ທ່ານ.

2.2. ກຸ່ມຕົວຢ່າງ.

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ໄດ້ແກ່: ຫົວໜ້າຫ້ອງການສຶກສາທິ ການ ແລະ ກິລາ, ຫົວໜ້າໜ່ວຍງານພາຍໃນຫ້ອງການສຶກສາທິການ ແລະ ກິລາ, ປະປານກຸ່ມໂຮງຮຽນປະຖົມສຶກສາ, ຜູ້ອຳນວຍການໂຮງ
ຮຽນປະຖົມສຶກສາ, ຄະນະພັດທະນາການສຶກສາຂັ້ນບ້ານ, ອົງການຈັດຕັ້ງມະຫາຊົນຂັ້ນບ້ານ ແລະ ສະມາຄົມພໍ່ແມ່

ນັກຮຽນ. ກຳນົດຂະໜາດຕົວຢ່າງໂດຍໃຊ້ຕາຕະລາງຂອງ (Krejcie,R.V.,&Morgan,D.W, 1970, pp. 607-610) ມີຈຳນວນຕົວຢ່າງທັງໝົດ: 354 ຄົນ. ໂດຍໃຊ້ວິທີການເລືອກກຸ່ມຕົວຢ່າງແບບວິທີເຈາະຈົງ (Purposive Sampling)

2.3. ຂັ້ນຕອນດຳເນີນການ.

ຜູ້ວິໄຈໄດ້ກະກຽມສ້າງຄຳຖາມສຳພາດຈຳນວນ 10 ຄຳຖາມ,ສ້າງແບບສອບຖາມຈຳນວນ 43 ຂໍ້ຄຳຖາມ ແລະແບບປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຈຳນວນ 43 ຂໍ້ເຊັ່ນກັນ ເພື່ອລົງເກັບກຳຂໍ້ມູນກຸ່ມເປົ້າໝາຍ ໃນ 3 ເມືອງຈຳນວນ 354 ຄົນ ເຊິ່ງໃຊ້ເວລາ 2 ເດືອນຈຶ່ງສຳເລັດ ພາຍຫຼັງລວບລວມຂໍ້ມູນຄືນມາແລ້ວ ກໍກະກຽມເຂົ້າສູ່ຂະບວນການວິເຄາະໃນຂັ້ນຕອນຕໍ່ໄປ.

2.4. ການວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນ, ຫຼັງຈາກທີ່ຜູ້ວິໄຈໄດ້ດຳເນີນການເກັບລວບລວມຂໍ້ມູນຈາກການສຳພາດ, ສອບຖາມ ແລະ ປະເມີນ ສຳເລັດແລ້ວ,ໄດ້ນຳເອົາຂໍ້ມູນທີ່ໄດ້ມາກວດສອບເບິ່ງຄວາມຖືກຕ້ອງຂອງຂໍ້ມູນວ່າມີຂໍ້ມູນ
ສູນຫາຍ ຫຼື ບໍ? ແລະ ໄດ້ແບ່ງການວິເຄາະອອກເປັນ 2 ກໍລະນີ ໄດ້ແກ່:

1) ການວິເຄາະຂໍ້ມູນທີ່ໄດ້ຈາກການສໍາພາດ.ເປັນການນໍາໃຊ້ຫຼັກການໃນການວິເຄາະດ້ານເນື້ອໃນ (Content Analysis) ຂອງຂໍ້ມູນຈາກເອກະສານ ແລະ ຂໍ້ມູນຈາກການສໍາພາດ.
2) ການວິເຄາະຂໍ້ມູນທີ່ໄດ້ຈາກແບບສອບຖາມ ແລະ ການວິເຄາະຂໍ້ມູນທີ່ໄດ້ຈາກແບບປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້ໃນການເຂົ້າມາມີສ່ວນຮ່ວມຂອງຊຸມຊົນເປັນການວິເຄາະຂໍ້ມູນ ຄວາມຄິດເຫັນກ່ຽວກັບລະດັບ ແລະ ແນວທາງການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ. ໂດຍການນໍາໃຊ້ສະຖິຕິພັນລະນາ (Descriptive Statistics) ວິເຄາະຂໍ້ ມູນດ້ວຍໂປຣແກຣມສໍາເລັດຮູບທາງສະຖິຕິ. ຕາຕະລາງທີ1: ຄວາມໝາຍ ແລະ ຄະແນນສະເລ່ຍ (ເບິ່ງໜ້າທີ 127)

**3. ຜົນໄດ້ຮັບ**

3.1 ຜົນການວິເຄາະຂໍ້ມູນກ່ຽວກັບສະພາບບັນຫາການມີສ່ວນຮ່ວມຂອງຊຸມຊົນ

1) ມີນິຕິກໍາທີ່ລະອຽດໃນການສ້າງຕັ້ງກຸ່ມໂຮງຮຽນປະຖົມສຶກສາພ້ອມທັງຄູ່ມືໃນການຈັດຕັ້ງປະຕິບັດທີ່ເປັນເອກະພາບກັນໃນທົ່ວປະເທດ, ທົ່ວແຂວງເຊກອງແມ່ນໄດ້ສໍາເລັດການສ້າງກຸ່ມໂຮງຮຽນປະຖົມສຶກສາໃນແຕ່ລະເມືອງທີ່ຂຶ້ນກັບແຂວງເຊກອງ ທັງໝົດມີ 25 ກຸ່ມໂຮງຮຽນ, ມີໂຄງປະກອບການຈັດຕັ້ງຂອງ ແຕ່ລະກຸ່ມໂຮງຮຽນທີ່ໄດ້ການແຕ່ງຕັ້ງຈາກຫ້ອງການສຶກສາທິການ ແລະ ກິລາເມືອງ ປະກອບມີ ປະທານກຸ່ມໂຮງຮຽນ ປະຖົມສຶກສາທີ່ເປັນໂຮງຮຽນໃຈກາງ, ຮອງປະທານກຸ່ມ, ຜູ້ຮັບຜິດຊອບວຽກງານດ້ານຕ່າງໆ, ຄະນະພັດທະນາ ການສຶກສາຂັ້ນບ້ານ (ຄພສບ), ຕ່າງໜ້າຜູ້ປົກຄອງນັກຮຽນ, ອົງການຈັດຕັ້ງບ້ານຫຼືກຸ່ມບ້ານ.

2) ໃນການພັດທະນາກຸ່ມໂຮງຮຽນຜ່ານມາ ເຫັນວ່າສັງຄົມ ຫຼື ຊຸມຊົນ ຍັງບໍ່ທັນໄດ້ເຂົ້າມາມີສ່ວນຮ່ວມໃນການພັດທະນາເທົ່າທີ່ຄວນ, ການພັດທະນາໂຮງຮຽນທີ່ເປັນສະມາຊິກກຸ່ມສ່ວນຫຼາຍແມ່ນຍັງເອື້ອຍອີງໃສ່ ແຕ່ງົບປະມານ ຂອງພາກລັດ, ເຊິ່ງຈະເຫັນໄດ້ວ່າ ຍັງມີຫຼາຍກຸ່ມໂຮງຮຽນ ທີ່ມີສະພາບແວດລ້ອມໂຮງຮຽນຍັງບໍ່ທັນມີຄວາມຈົບງາມ, ບໍ່ມີຄວາມເໝາະສົມແກ່ການຈັດການຮຽນ-ການສອນ, ອາຄານຮຽນຍັງເປື້ອນເປິ້, ໂຕະຕັ່ງບໍ່ພຽງພໍໃຫ້ແກ່ນັກຮຽນ, ເດີນອ້ອມຮອບໂຮງຮຽນບໍ່ມີຕົ້ນໄມ້ໃຫ້ຮົ່ມ,ຕົ້ນໄມ້ປະດັບປະດາ, ອຸປະກອນຮັບໃຊ້ການເຮັດກິດ ຈະກໍານັກຮຽນຍັງຂາດເຂີນບໍ່ພຽງພໍກັບຄວາມຕ້ອງການ

3) ການເຂົ້າມາມີສ່ວນຮ່ວມໃນການຕິດຕາມ, ການປະເມີນການປະຕິບັດ ໜ້າທີ່ຂອງຜູ້ບໍລິຫານ ໂຮງຮຽນ, ການສິດສອນຂອງຄູ ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ເຮັດໃຫ້ການວາງແຜນພັດທະນາກຸ່ມໂຮງ ຮຽນແມ່ນບໍ່ມີພາກສ່ວນຊຸມຊົນເຂົ້າມາມີສ່ວນຮ່ວມ, ການນໍາໃຊ້ເງິນບໍລິຫານໂຮງຮຽນທີ່ໄດ້ຮັບການແບ່ງປັນຈາກກະຊວງສຶກສາທິການ ແລະ ກິລາ ແມ່ນໃຊ້ຈ່າຍບໍຖືກຕ້ອງຕາມຄໍາແນະນໍາ, ການກວດກາ ບໍ່ມີຄວາມໂປ່ງໃສ ແລະ ການສະຫຼຸບການໃຊ້ຈ່າຍບໍ່ມີຄວາມຖືກຕ້ອງຕາມລະບຽບຫຼັກການຂອງການເງິນວາງອອກ.

2.5 ຜົນການວິເຄາະຂໍ້ມູນກ່ຽວກັບລະດັບການມີສ່ວນຮ່ວມຈາກຕາຕະລາງ 2 ພົບວ່າ: ຜູ້ຕອບແບບສອບຖາມສ່ວນຫຼາຍມີລະດັບຄວາມຄິດເຫັນກ່ຽວກັບການມີສ່ວນຮ່ວມ ໂດຍລວມຢູ່ໃນລະດັບຫຼາຍ ($\bar{x} = 3.62, SD = 0.54$). ແຕ່ເມື່ອພິຈາລະນາເປັນລາຍດ້ານ ສັງເກດເຫັນວ່າ ດ້ານທີ່ມີຄ່າສະເລ່ຍສູງກວ່າໝູ່ໄດ້ແກ່ ດ້ານການເຂົ້າຮ່ວມກິດຈະກໍາເຄື່ອນໄຫວຕ່າງໆຂອງໂຮງຮຽນຢູ່ໃນລະດັບຫຼາຍ ($\bar{x} = 3.74, SD = 0.70$), ຮອງລົງມາແມ່ນດ້ານການມີສ່ວນຮ່ວມສົ່ງເສີມວຽກງານວິຊາການ ຢູ່ໃນລະດັບຫຼາຍ($\bar{x} = 3.69, SD = 0.60$), ສ່ວນດ້ານທີ່ມີລະດັບຄ່າສະເລ່ຍ ນ້ອຍກວ່າໝູ່ແມ່ນດ້ານການບໍລິຫານງົບປະມານ ຢູ່ໃນລະດັບປານກາງ ($\bar{x} = 3.50, SD = 0.42$).

2.6 ຜົນການວິເຄາະແນວທາງ ການມີສ່ວນຮ່ວມ

ຜູ້ວິໄຈກໍານົດແນວທາງການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ນໍາໃຊ້ຂໍ້ສະຫຼຸບ ຈາກການວິເຄາະຂໍ້ມູນ ໃນຂໍ້ທີ 3.2 ໂດຍການນໍາເອົາຜົນການ ວິເຄາະລະດັບຄວາມຄິດເຫັນຂອງແຕ່ລະດ້ານ ມາສ້າງເປັນປະເດັນໃນການສົນທະນາກຸ່ມ (Focus Group) ໂດຍ ການກໍານົດໃຫ້ຜູ້ບໍລິຫານ ຂອງໂຮງຮຽນທີ່ເປັນສະມາ ຊິກກຸ່ມໂຮງຮຽນປະຖົມ ທີ່ເປັນຕົວແບບ ພາຍໃນແຂວງຈໍານວນ 7 ທ່ານ ເປັນຜູ້ປະເມີນແນວທາງທີ່ກໍານົດຂຶ້ນ, ສາມາດສະຫຼຸບແນວ ທາງໃນການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ ມີດັ່ງນີ້: (1)ແນວທາງທີ 1 : ການມີສ່ວນຮ່ວມສົ່ງເສີມວຽກງານວິຊາການ, (2)ແນວທາງທີ 2: ການຄຸ້ມຄອງ ແລະ ປົກປັກຮັກສາໂຮງຮຽນ,(3)ແນວທາງທີ 3: ການເຂົ້າຮ່ວມກິດຈະກໍາເຄື່ອນໄຫວຕ່າງໆ ຂອງໂຮງຮຽນ,(4)ແນວທາງທີ 4: ການບໍລິຫານງົບປະມານ,(5)ແນວທາງທີ 5: ການວາງແຜນພັດທະນາໂຮງຮຽນ.

2.7 ຜົນການປະເມີນແນວທາງ ການມີສ່ວນຮ່ວມ

ຜົນການປະເມີນແນວທາງ ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາໂຮງຮຽນຜົນການປະເມີນຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຂອງແນວທາງການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ, ຜູ້ວິໄຈໄດ້ນໍາແນວທາງໃຫ້ຜູ້ບໍລິຫານໂຮງຮຽນ ຈໍານວນ 7 ທ່ານ (ເປັນກຸ່ມດຽວກັນກັບຂໍ້ທີ 3.3) ກວດສອບ ແລະ ປະເມີນຄວາມເໝາະສົມ ແລະຄວາມເປັນໄປໄດ້ໂດຍການພິຈາລະນາຕາມແນວທາງການມີສ່ວນຮ່ວມ ຕາຕະລາງທີ3: ຜົນການປະເມີນແນວທາງ ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ ພາບລວມ ຂອງ 5 ແນວທາງ ເຊິ່ງສະແດງໃນຕາຕະລາງ (ເບິ່ງໜ້າທີ 127)

ຈາກຕາຕະລາງ 3 ພົບວ່າ: ແນວທາງການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນ ຕາມ 5 ແນວທາງ ໃນດ້ານຄວາມເໝາະສົມ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\bar{x} = 4.39, \mathrm{SD} = 0.57$), ສ່ວນຄວາມເປັນໄປໄດ້ໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\bar{x} = 4.43, \mathrm{SD} = 0.49$),ຖ້າຈໍາແນກເປັນແຕ່ລະແນວທາງ ເຫັນວ່າ ແນວທາງທີ 3 ແມ່ນມີຄວາມເໝາະສົມຫຼາຍກວ່າໝູ່ ($\bar{x} = 4.48, \mathrm{SD} = 0.70$) ແລະ ຄວາມເປັນໄປໄດ້ ຫຼາຍກວ່າໝູ່ ແມ່ນແນວທາງທີ4 ($\bar{x} = 4.45, \mathrm{SD} = 0.68$).

**3. ວິພາກຜົນ**

ຈາກຜົນການສຶກສາແນວທາງການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ ມີປະເດັນສໍາຄັນທີ່ສົມຄວນນໍາມາອະພິປາຍ ດັ່ງນີ້:

3.1 ສະພາບບັນຫາຂອງການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນປະຖົມສາມັນສຶກສາຢູ່ເມືອງ 3 ສ້າງຂະແໜງການສຶກສາແຂວງເຊກອງ ພົບວ່າ: ໃນການພັດທະນາກຸ່ມໂຮງຮຽນຜ່ານມາ ເຫັນວ່າ ສັງຄົມ ຫຼື ຊຸມຊົນ ຍັງບໍ່ທັນໄດ້ເຂົ້າມາມີສ່ວນຮ່ວມໃນການພັດທະນາເທົ່າທີ່ຄວນ, ການພັດທະນາໂຮງຮຽນທີ່ເປັນສະມາຊິກກຸ່ມສ່ວນຫຼາຍແມ່ນຍັງເອື້ອຍອີງໃສ່ ແຕ່ງົບປະມານ ຂອງພາກລັດ.

ການເຂົ້າມາມີສ່ວນຮ່ວມໃນການຕິດຕາມ, ການປະເມີນການປະຕິບັດ ໜ້າທີ່ຂອງຜູ້ບໍລິຫານ ໂຮງຮຽນ, ການສິດສອນຂອງຄູ ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ເຮັດໃຫ້ການວາງແຜນພັດທະນາກຸ່ມໂຮງ ຮຽນແມ່ນບໍ່ມີພາກສ່ວນຊຸມຊົນເຂົ້າມາມີສ່ວນຮ່ວມ, ການນໍາໃຊ້ເງິນບໍລິຫານໂຮງຮຽນທີ່ໄດ້ຮັບການແບ່ງປັນຈາກກະຊວງສຶກສາທິການ ແລະ ກິລາ ແມ່ນໃຊ້ຈ່າຍບໍ່ຖືກຕ້ອງຕາມຄໍາແນະນໍາ, ການກວດກາ ບໍ່ມີຄວາມໂປ່ງໃສ ແລະ ການສະຫຼຸບການໃຊ້ຈ່າຍບໍ່ມີຄວາມຖືກຕ້ອງຕາມລະບຽບຫຼັກການຂອງການເງິນວາງອອກ.

3.2 ລະດັບການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນປະຖົມສາມັນສຶກສາຢູ່ເມືອງ 3 ສ້າງຂະແໜງການສຶກສາ ແຂວງເຊກອງ ພົບວ່າ: ລະດັບການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນປະຖົມ ໂດຍລວມແມ່ນຢູ່ໃນລະດັບຫຼາຍ, ເຊິ່ງສອດຄ່ອງກັບງານວິໄຈຂອງ ກອບກິດ ການຄວນຄິດ (2021) ໄດ້ເຮັດການວິໄຈເລື່ອງການມີສ່ວນຮ່ວມຂອງຊຸມຊົນໃນການຈັດການສຶກສາ ໂຮງຮຽນໃນສັງກັດເຂດພື້ນທີ່ການສຶກສາຊັ້ນປະຖົມສຶກສາລະຍອງ ເຂດ1 ຜົນການວິໄຈພົບວ່າ: ການມີສ່ວນຮ່ວມຂອງຊຸມຊົນໃນການຈັດການສຶກສາຂອງໂຮງຮຽນໃນສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ລະຍອງ ເຂດ 1 ໂດຍທັງໝົດ ແລະ ແຕ່ລະດ້ານມີສ່ວນຮ່ວມຢູ່ໃນລະດັບຫຼາຍລຽງລຳດັບຈາກຄ່າສະເລ່ຍ ຈາກຫຼາຍໄປຫານ້ອຍ 3 ອັນດັບເບື້ອງຕົ້ນ ໄດ້ແກ່ ດ້ານງານງົບປະມານ, ດ້ານວຽກງານວິຊາການ ແລະດ້ານການບໍລິຫານ ງານບຸກຄົນ ຕາມລຳດັບ ແລະ ສອດຄ່ອງກັບຜົນການວິໄຈຂອງ ປາວຢ່າງ ກົງຈິ (2017) ໄດ້ສຶກສາການມີສ່ວນຮ່ວມຂອງຊຸມຊົນຕໍ່ການຈັດການສຶກສາຂອງໂຮງຮຽນມັດທະຍົມສົມບູນເມືອງ ລ້ອງຊານ ແຂວງ ໄຊສົມບູນ ຜົນການຄົ້ນຄວ້າພົບວ່າ: ລະດັບການມີສ່ວນຮ່ວມຂອງຊຸມຊົນຕໍ່ການຈັດການສຶກສາຂອງໂຮງຮຽນມັດທະຍົມສົມບູນເມືອງ ລ້ອງຊານ ແຂວງ ໄຊສົມບູນ ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາແຕ່ລະດ່ານພົບວ່າ ທຸກດ້ານຢູ່ ໃນລະດັບຫຼາຍ ຄື: ດ້ານສະພາບແວດລ້ອມ,ດ້ານວຽກງານວິຊາການ ແລະ ດ້ານກິດຈະການນັກຮຽນ.

3.3 ແນວທາງການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນກຸ່ມໂຮງຮຽນປະຖົມສາມັນສຶກສາ ຢູ່ເມືອງ 3 ສ້າງຂະແໜງການສຶກສາ ແຂວງເຊກອງ ປະກອບມີ 5 ແນວທາງການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນປະຖົມສາມັນສຶກສາຄື:(1)ແນວທາງທີ 1 : ການມີສ່ວນຮ່ວມສົ່ງເສີມວຽກງານວິຊາການ,(2)ແນວທາງທີ 2: ການຄຸ້ມຄອງ ແລະ ປົກປັກຮັກສາໂຮງຮຽນ,(3)ແນວທາງທີ 3: ການເຂົ້າຮ່ວມກິດຈະກຳເຄື່ອນໄຫວຕ່າງໆ ຂອງໂຮງຮຽນ, (4)ແນວທາງທີ 4: ການບໍລິຫານງົບປະມານ, (5)ແນວທາງທີ 5 ການວາງແຜນພັດທະນາໂຮງຮຽນ.

3.4 ຈາກການປະເມີນແນວທາງການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນປະຖົມສາມັນສຶກສາ ຢູ່ເມືອງ 3 ສ້າງ ຂະແໜງການສຶກສາ ແຂວງເຊກອງ ພົບວ່າ ແນວທາງການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນ ກຸ່ມໂຮງຮຽນປະຖົມສາມັນສຶກສາ ຢູ່ເມືອງ 3 ສ້າງ ຂະແໜງການສຶກສາ ແຂວງເຊກອງໂດຍມີລະດັບຄຸນນະພາບໃນລະດັບຫຼາຍທີ່ສຸດ ເມື່ອພິຈາລະນາເປັນລາຍດ້ານ ພົບວ່າດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍແມ່ນແນວທາງທີ 4 ການບໍລິຫານງົບປະມານ. ເຊິ່ງສອດຄ່ອງກັບງານວິໄຈ ຂອງ ໄຊຊຸມພົນ ພິທັກ (ພສ 2559) ໄດ້ສຶກສາຮູບແບບການມີສ່ວນຮ່ວມຂອງຊຸມຊົນໃນການຈັດການສຶກສາທີ່ມີປະສິດທິພາບຂອງໂຮງຮຽນຕຳຫຼວດຕະເວນຊາຍແດນ ຜົນການວິໄຈ ພົບວ່າການປະເມີນຄຸນນະພາບຂອງ ຮູບແບບຈາກຜູ້ຊຽວຊານ ໂດຍການສົນ ທະນາກຸ່ມ ພົບວ່າລະດັບຄຸນນະພາບດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບຫຼາຍ ແລະສອດຄ່ອງກັບຜົນການວິໄຈຂອງບຸດສະຣິນ ຊານຊາຕຣີ (2557) ໄດ້ສຶກສາການມີສ່ວນຮ່ວມຂອງຊຸມຊົນໃນການບໍລິຫານໂຮງຮຽນ ເທດບານ 2 ວັດກາງທຸມມາວາດ "ສິຣິອຸບປະຖຳ" ສັງກັດອົງການປົກຄອງສ່ວນທ້ອງຖິ່ນ ນັດນິຄົມ ຈັງຫວັດ ຊົນບຸລີ ຜົນການວິໄຈ ພົບວ່າ: 1) ການມີສ່ວນຮ່ວມຂອງຊຸມຊົນໃນການບໍລິຫານ ໂຮງຮຽນເທດບານ 2 ວັດກາງທຸມມາວາດ "ສິຣິອຸບປະຖຳ" ສັງກັດອົງການປົກຄອງສ່ວນທ້ອງຖິ່ນນັດນິຄົມ ຈັງຫວັດຊົນບຸລີ ໂດຍລວມ ມີຄ່າສະເລ່ຍຢູ່ໃນລະດັບຫລາຍ ເມື່ອພິຈາລະນາລາຍດ້ານ ພົບວ່າ ມີຄ່າສະເລ່ຍຢູ່ໃນລະດັບຫຼາຍທຸກດ້ານ ລຽງລຳດັບຄື: ດ້ານການ

ບໍລິຫານງານບຸກຄົນ ຮອງລົງມາຄື ດ້ານງົບປະມານ ດ້ານບໍລິຫານງານທົ່ວໄປ ສ່ວນຂໍ້ທີ່ມີ ຄ່າສະເລ່ຍຢູ່ໃນລໍາດັບສຸດທ້າຍຄື ດ້ານວິຊາການ 2) ຜົນການປຽບທຽບການມີສ່ວນຮ່ວມຂອງຊຸມຊົນໃນການບໍລິຫານໂຮງຮຽນເທດບານ 2 ວັດກາງທຸມມາອາດ "ສີຣີອຸບປະຖໍາ" ສັງກັດອົງການປົກຄອງ ສ່ວນທ້ອງຖິ່ນນັດນິຄົມ ຈັງຫວັດຊົນບຸລີ ຈໍາແນກຕາມເພດ ສະຖານະ/ຕໍາແໜ່ງ ແລະ ລາຍໄດ້ ທັງໂດຍລວມ ແລະ ເປັນລາຍດ້ານ ພົບວ່າແຕກຕ່າງກັນຢ່າງບໍ່ມີໄນຍະສໍາຄັນທາງສະຖິຕິ.

**4. ສະຫຼຸບຜົນການວິໄຈ**

ຂໍ້ສະຫຼຸບທີ່ໄດ້ຈາກການວິໄຈຄັ້ງນີ້ ແມ່ນເປັນການຄົ້ນຄວ້າທີ່ສອດຄ່ອງກັບຈຸດປະສົງການວິໄຈໂດຍສາມາດ ສະຫຼຸບຜົນການວິໄຈ ຄື: ສັງຄົມ ຫຼື ຊຸມຊົນ ຍັງບໍ່ທັນໄດ້ເຂົ້າມາມີສ່ວນຮ່ວມໃນກາພັດທະນາເທົ່າທີ່ຄວນ, ການພັດທະ ນາໂຮງຮຽນທີ່ເປັສະມາຊິກກຸ່ມສ່ວນຫຼາຍແມ່ນຍັງເອື້ອອີງໃສ່ແຕ່ງົບປະມານ ຂອງພາກລັດ, ການເຂົ້າມາມີສ່ວນຮ່ວມໃນການຕິດຕາມ, ການປະເມີນການປະຕິບັດໜ້າທີ່ຂອງຜູ້ບໍລິຫານ ໂຮງຮຽນ, ການສິດສອນຂອງຄູ ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ເຮັດໃຫ້ການວາງແຜນພັດທະນາກຸ່ມໂຮງ ຮຽນແມ່ນບໍ່ມີພາກສ່ວນຊຸມຊົນເຂົ້າມາມີສ່ວນຮ່ວມ, ການນໍາໃຊ້ເງິນບໍລິຫານໂຮງຮຽນທີ່ໄດ້ຮັບການແບ່ງປັນຈາກກະຊວງສຶກສາທິການ ແລະ ກິລາ ແມ່ນໃຊ້ຈ່າຍບໍ່ຖືກຕ້ອງຕາມຄໍາແນະນໍາ, ການກວດກາບໍ່ມີຄວາມໂປ່ງໃສ ແລະ ມີການສະຫຼຸບການໃຊ້ຈ່າຍບໍ່ມີຄວາມຖືກຕ້ອງຕາມລະບຽບຫຼັກການຂອງການເງິນວາງອອກ.

ຜົນການສຶກສາລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາ: ກໍລະນີສຶກສາກຸ່ມໂຮງຮຽນປະຖົມສຶກສາ ຂອງເມືອງ 3 ສ້າງ ຂະແໜງການສຶກສາ ແລະ ກິລາ ຢູ່ແຂວງເຊກອງ ທັງ 5 ດ້ານ ໂດຍລວມຢູ່ໃນລະດັບຫຼາຍ. ຖ້າຈໍາແນກເປັນດ້ານສັງເກດເຫັນວ່າ ດ້ານການເຂົ້າຮ່ວມກິດຈະກໍາເຄື່ອນໄຫວຕ່າງໆຂອງໂຮງຮຽນ ມີລະດັບຫຼາຍກວ່າໝູ່, ຮອງລົງມາແມ່ນດ້ານການມີສ່ວນຮ່ວມສົ່ງເສີມວຽກງານວິຊາການ. ສ່ວນດ້ານທີ່ມີ
ລະດັບຄວາມຄິດເຫັນ ນ້ອຍສຸດແມ່ນດ້ານການບໍລິຫານງົບປະມານ.

ຜົນການປະເມີນແນວທາງການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາໂຮງຮຽນກຸ່ມໂຮງຮຽນປະຖົມສາມັນສຶກສາ ຢູ່ເມືອງ 3 ສ້າງ ຂະແໜງການສຶກສາ ແຂວງເຊກອງ ໂດຍລວມມີຄວາມເໝາະສົມ ໃນລະດັບດີ ຫຼາຍ. ສ່ວນຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາເປັນແຕ່ລະແນວທາງ ພົບວ່າ: ຄວາມເໝາະສົມໃນລະດັບຫຼາຍ ແມ່ນແນວທາງທີ 3 ການເຂົ້າຮ່ວມກິດຈະກໍາເຄື່ອນໄຫວຕ່າງໆຂອງໂຮງຮຽນ ແລະ ມີຄວາມເປັນໄປໄດ້ ໃນລະດັບຫຼາຍແມ່ນແນວທາງທີ 4 ການບໍລິຫານງົບປະມານ.

**5. ຄໍາສະແດງຄວາມຮູ້ບຸນຄຸນ**

ຂໍສະແດງຄວາມຂອບໃຈມາຍັງຫ້ອງການສຶກສາທິການ ແລະ ກິລາເມືອງ, ປະທານກຸ່ມໂຮງຮຽນປະຖົມສຶກສາ,ຜູ້ອໍານວຍການໂຮງຮຽນປະຖົມທີ່ເປັນສະມາຊິກກຸ່ມ,ປະທານຄະນະພັດທະນາການສຶກສາຂັ້ນບ້ານ,ອົງການຈັດຕັ້ງມະຫາຊົນຂັ້ນບ້ານ ແລະ ສະມາຄົມພໍ່ແມ່ນັກຮຽນ ທັງ 3 ເມືອງຄື: ເມືອງລະມາມ,ເມືອງດາກຈຶງ,ເມືອງກະລຶມ ແຂວງເຊກອງ ທີ່ໄດ້ໃຫ້ການຮ່ວມມືໃນການໃຫ້ສໍາພາດ,ຕັ້ງໃຈຕອບແບບສອບຖາມ,ແບບປະເມີນ ແລະ ອໍານວຍຄວາມສະດວກ ໃນການດໍາເນີນງານເກັບກໍາຂໍ້ມູນເພື່ອການຄົ້ນຄວ້າຄັ້ງນີ້ໄດ້ທັນເວລາ.

**6. ເອກະສານອ້າງອີງ**

ກອບກິດ ການຄວນຄິດ. (2018). ການມີສ່ວນຮ່ວມຂອງຊຸມຊົນໃນການຈັດການສຶກສາໃນໂຮງຮຽນ ໃນສັງກັດສໍານັກງານເຂດພື້ນທີ່ການສຶກສາປະຖົມສຶກສາລະຍອງ ເຂດ1. ງານນິພົນ

ການສຶກສາມະຫາບັນດິດ,ສາຂາວິຊາການ ບໍລິຫານການສຶກສາ,ຄະນະສຶກສາສາດ, ມະຫາວິທະຍາໄລບູລະພາ.

ກະຊວງສຶກສາທິການແລະກິລາ. (2020). ແຜນ ພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ IX (2021-2025). ນະຄອນຫຼວງວຽງຈັນ: ບໍລິສັດລັດວິສາຫະກິດໂຮງພິມສຶກສາ.

ກຸນລະຍາ ຕັນຕິຜະລາຊີວະ. **(2001).** ການມີ ສ່ວນຮ່ວມຂອງຜູ້ປົກຄອງກັບ ໂຮງຮຽນ. ວາລະສານການສຶກສາ ປະຖົມມະໄວ ປີທີ**5 ,30.**

ຄຳແວ່ນ ປັນຍານຸວົງ. (2018). ການມີສ່ວນຮ່ວມຂອງ ຜູ້ປົກຄອງຕໍ່ກັບວຽກງານກິດຈະການນັກຮຽນ ຢູ່ໂຮງຮຽນມັດທະຍົມສົມບູນ ເມືອງປາຊັນ ແຂວງບໍລິຄຳໄຊ. ນະຄອນຫຼວງວຽງຈັນ: ບົດ ວິທະຍານິພົນປະລິນຍາໂທ,ສາຂາວິຊາ ການ ສຶກສາເພື່ອພັດທະນາທ້ອງຖິ່ນ,ຄະນະສຶກສາ ສາດ,ມະຫາວິທະຍາໄລແຫ່ງຊາດ.

ຈິລາພອນ ອຸ່ນອົກ. (2014). ການສຶກສາຄວາມຄາດ ຫວັງຂອງຄູ ແລະ ການມີສ່ວນຮ່ວມຂອງຜູ້ ປົກຄອງໃນການສົ່ງເສີມພັດທະນາການເດັກໄວ ປະຖົມຂອງສູນພັດທະນາເດັກນ້ອຍ ສັງກັດອົງ ກອນປົກຄອງສ່ວນທ້ອງຖິ່ນ ໃນອຳເພີມວກ ເຫລັກ ແຂວງສະລະບູລີ. ວາລະສານວິຊາ ການ, 65.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2019). ສຶກສາສະພາບ ແລະ ບັນຫາການສ້າງໂຮງຮຽນ ຕົວແບບຄຸນນະພາບສາຍສາມັນສຶກສາຂອງ ລັດ. ນະຄອນຫຼວງວຽງຈັນ: ບໍລິສັດລັດວິ ສາຫະກິດໂຮງພິມສຶກສາ.

ສະນິດ ໄທກ້າ. (2006). ການມີສ່ວນຮ່ວມການ ບໍລິຫານຂອງວຽກງານລາດສະການຄູພາຍໃນ ສະຖາບັນການສຶກສາ ສັງກັດສຳນັກງານ ປະຖົມສຶກສາສາລະບູລີເຂດ 1. ຈັງຫວັດ ຊຽງໃໝ່: ບົດວິທະຍານິພົນປະລິນຍາໂທ, ຄະນະສຶກສາສາດ,ມະຫາວິທະຍາໄລຊຽງໃໝ່.

ສິດທິພອນ ນິຍົມສີສົມສັກ. (2012). ການພັດທະນາ ໂຮງຮຽນສູ່ຄວາມເປັນເລີດ. ຈັງຫວັດຂອນ ແກ່ນ: ວິທະຍານິພົນມະຫາບັນດິດ,ຄະນະສຶກ ສາສາດ,ມະຫາວິທະຍາໄລຂອນແກ່ນ.

ສຸພາວະດີ ວັນນະສີລີ. (2012). ການມີສ່ວນຮ່ວມຂອງ ຜູ້ປົກຄອງນັກຮຽນໃນການບໍລິຫານໂຮງຮຽນ ປວກແດງ ພິທະຍາຄົມ ສັງກັດສຳນັກງານເຂດ ພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ18. ງານນິພົນການສຶກສາມະຫາບັນດິດ,ສາຂາວິຊາ ການບໍລິຫານການສຶກສາ,ຄະນະສຶກສາສາດ, ມະຫາວິທະຍາໄລບູລະພາ.

ສຸວິໄຊ ພູມມາ. (2016). ການມີສ່ວນຮ່ວມຂອງຊຸມຊົນ ຕໍ່ການບໍລິຫານກິດຈະການນັກຮຽນໂຮງຮຽນ ມັດທະຍົມສົມບູນເອກະພາບ ເມືອງໄຊຍະບຸລີ ແຂວງໄຊຍະບຸລີ. ບົດວິທະຍານິພົນປະລິນຍາ ໂທ,ສາຂາວິຊາການສຶກສາເພື່ອພັດທະນາທ້ອງ ຖິ່ນ,ຄະນະສຶກສາສາດ,ມະຫາວິທະຍາໄລ ແຫ່ງຊາດ.

ສູນຄົ້ນຄວ້າ ແລະ ປະເມີນຜົນການສຶກສາ,ສວສ. (2019). ສຶກສາສະພາບແລະບັນຫາການສ້າງ ໂຮງຮຽນຕົວແບບຄຸນນະພາບສາຍສາມັນສຶກ ສາຂອງລັດ. ນະຄອນຫຼວງວຽງຈັນ: ສະຖາບັນ ຄົ້ນຄວ້າວິທະຍາສາດການສຶກສາ,ກະຊວງສຶກ ສາທິການ ແລະ ກິລາ.

ສິນທະຍາ ພິນສີ. (2004). ການພັດທະນາທີ່ໃຊ້ໃນ ພາສາອັງກິດ. ມະຫາວິທະຍາໄລ ລາດສະພັດ.

ສົມພອນ ວັນນະລາດ. (2018). ການມີສ່ວນຮ່ວມຂອງ ຄູໃນການປະຕິບັດມາດຕະຖານປະກັນຄຸນ

ນະພາບການສຶກສາ ສະຖານອາຊີວະສຶກສາ ໃນໂຮງຮຽນເຕັກນິກວິຊາຊີບ ບໍລິຄຳໄຊ. ນະຄອນຫຼວງວຽງຈັນ: ປິດວິທະຍານິພົນ ປະລິນຍາໂທສຶກສາສາດ,ສາຂາການສຶກສາ ເພື່ອພັດທະນາທ້ອງຖິ່ນ,ມະຫາວິທະຍາໄລ ແຫ່ງຊາດ.

ສຳລິດ ກາງເພັງ. (2002). ຮູບແບບການມີສ່ວນຮ່ວມ ໃນສະຖານສຶກສາ. ວາລະສານວິຊາການ 5(4), 9-12.

ຊູຊາດ ພວງສົມຈິດ. (1998). ການວິເຄາະປັດໄຈທີ່ ຊ່ວຍສົ່ງເສີມ ແລະ ປັດໄຈທີ່ເປັນອຸປະສັກຕໍ່ ການມີສ່ວນຮ່ວມຂອງຊຸມຊົນກັບໂຮງຮຽນ ປະຖົມສຶກສາ ໃນເຂດປະລິມົນທົນ ກຸງເທບ ມະຫານະຄອນ. ກຸງເທບມະຫານະຄອນ: ວິທະຍານິພົນຄູສາດມະຫາບັນດິດ,ສາຂາວິຊາ ບໍລິຫານການສຶກສາ,ບັນດິດວິທະຍາໄລ,ຈຸລາ ລົງກອນມະຫາວິທະຍາໄລ.

ຍຸວັນທອນ ວຸທິເມລີ. (1991). ການພັດທະນາຊຸມຊົນ ຈາກທິດສະດີສູ່ການປະຕິບັດ. ຈັງຫວັດພິດ ສະນຸໂລກ: ຄະນະສຶກສາສາດ,ສະຖາບັນລາດ ສະພັດພິບູນສົງຄາມ.

ປະລິນຍາ ຈັນທະຄາມ ແລະ ຊັດໄຊ ຈິດຣະນັນ. (2020). ແນວທາງການພັດທະນາແຫຼ່ງຮຽນຮູ້ ໂດຍການມີສ່ວນຮ່ວມຂອງຊຸມຊົນ ສຳລັບ ສະຖານການສຶກສາສັງກັດສຳນັກງານພື້ນທີ່ ການສຶກສາປະຖົມສຶກສາມະຫາສະຄາມ ເຂດ 1. ວາລະສານມະຫາວິທະຍາໄລ ລາດສະພັດ ຮ້ອຍເອັດ ປີທີ14,ສະບັບທີ1, 98.

ປາລິນາ ໂກລະກຸນ. (1991). ການບໍລິຫານຈັດການ ສະຖານທີ່ສຶກສາ ແບບມີສ່ວນຮ່ວມ. ກຸງເທບ ມະຫານະຄອນ: ອັກຄະຣາພິພັດ.

ປາວຢ່າງ ກົງຈີ. (2017). ການມີສ່ວນຮ່ວມຂອງຊຸມຊົນ ຕໍ່ການຈັດການສຶກສາຂອງໂຮງຮຽນ ມັດທະຍົມສົມບູນ ເມືອງລ້ອງຊານ ແຂວງໄຊ ສົມບູນ. ນະຄອນຫຼວງວຽງຈັນ: ປິດວິທະຍາ ນິພົນປະລິນຍາໂທ,ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ.

ປັດຍາພອນ ໂປທາ. (2016). ການມີສ່ວນຮ່ວມຂອງ ຊຸມຊົນໃນການຈັດການສຶກສາຂັ້ນພື້ນຖານ ໂຮງຮຽນບ້ານເຂົາຕະແບກ ສັງກັດສຳນັກງານ ເຂດພື້ນທີ່ການສຶກສາປະຖົມສຶກສາຊົນບູລີ ເຂດ3. ປິດວິທະຍານິພົນປະລິນຍາໂທ,ສາຂາ ວິຊາການບໍລິຫານການສຶກສາ,ຄະນະສຶກສາ ສາດ,ມະຫາວິທະຍາໄລບູລະພາ.

ພະແນກສຶກສາທິການແລະກິລາ ແຂວງເຊກອງ. (2020). ແຜນພັດທະນາຂະແໜງການສຶກ ສາທິການແລະກິລາ ແຂວງເຊກອງ 5 ປີ ຄັ້ງທີ IX (2020-2024).

ພູວະລີ ພູນສະຫວັນ. (2021). ການມີສ່ວນຮ່ວມຂອງ ຊຸມຊົນໃນການພັດທະນາໂຮງຮຽນມັດທະຍົມ ຕອນປາຍ ມິດຕະພາບວຽງຈັນ-ໂຮ່ຈິມິນ. ນະຄອນຫຼວງວຽງຈັນ: ວິທະຍານິພົນລະດັບ ປະລິນຍາໂທ,ສາຂາວິຊາການສຶກສາເພື່ອການ ພັດທະນາທ້ອງຖິ່ນ,ມະຫາວິທະຍາໄລ ແຫ່ງຊາດ.

ພັນທະມົນ ຜົນເພັດ. (2005). ຫຼັກການ ແລະ ເຕັກນິກ ການວາງແຜັນ. ມະຫາວິທະຍາໄລທຳມະສາດ.

ວອນໄຊ ແກ້ວມະນີ. (2016). ສຶກສາການມີສ່ວນຮ່ວມ ຂອງຊຸມຊົນ ໃນການພັດທະນາໂຮງຮຽນ ມັດທະຍົມສົມບູນ ເມືອງເຟືອງ ແຂວງວຽງ ຈັນ. ນະຄອນຫຼວງວຽງຈັນ: ປິດວິທະຍານິພົນ ປະລິນຍາໂທ,ສາຂາວິຊາ ການສຶກສາເພື່ອ

ພັດທະນາທ້ອງຖິ່ນ,ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ.

ວົງເດືອນ ທຳມະວົງ. (2020). ການປະຕິບັດບົດບາດໜ້າທີ່ຂອງຄະນະພັດທະນາການສຶກສາການສຶກສາຂັ້ນບ້ານ ຕໍ່ກັບວຽກງານການສຶກສາໃນໂຮງຮຽນປະຖົມ ເມືອງໄຊທານີ ນະຄອນຫຼວງວຽງຈັນ. ວາລະສານວິທະຍາສາດການສຶກສາ ສະບັບທີ3, 51.

ອາພາ ພັກພິນໂຍນ. (2021). ການມີສ່ວນຮ່ວມແມ່ນຫຍັງ,ຄວາມໝາຍ ຄວາມສຳຄັນ ແລະອຸປະສັກຂອງການມີສ່ວນຮ່ວມ. ຄຣີນິກຜູ້ນຳ by Apa puckpinyo,https://www.youtube.com/watch?v=UIBVc5p1tFo.

ເຈດສະດາ ຫຼ້າຄຳ . (2004). ການມີສ່ວນຮ່ວມຄະນະກຳມະການ ການສຶກສາປະຈຳໂຮງຮຽນ ໃນຂົງເຂດການສຶກສາເພື່ອພັດທະນາໝູ່ບ້ານເຂດຊົນນະບົດຍາກຈົນ. ຈັງຫວັດຂອນແກ່ນ: ມະຫາວິທະຍາໄລຊຽງໃໝ່.

ເພັງ ເພີນຈິດ. (2017). ການມີສ່ວນຮ່ວມຂອງຄະນະພັດທະນາການສຶກສາຂັ້ນບ້ານ ໃນການບໍລິຫານໂຮງຮຽນມັດທະຍົມ ເມືອງປາກກະດິງ ແຂວງບໍລິຄຳໄຊ. ນະຄອນຫຼວງວຽງຈັນ: ບົດວິທະຍານິພົນປະລິນຍາໂທ,ສາຂາວິຊາການສຶກສາເພື່ອພັດທະນາທ້ອງຖິ່ນ, ຄະນະສຶກສາສາດ,ມະຫາວິທະຍາໄລແຫ່ງຊາດ.

ແສງເດືອນ ອາດທານ. (2016). ກົນລະຍຸດການມີສ່ວນຮ່ວມຂອງຊຸມຊົນໃນການຈັດການສຶກສາຂອງໂຮງຮຽນຂະໜາດນ້ອຍສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາຈັນທະບຸລີ ເຂດ2. ບົດວິທະຍານິພົນປະລິນຍາໂທ,ສາຂາວິຊາການບໍລິຫານການສຶກສາ,ຄະນະສຶກສາສາດ,ມະຫາວິທະຍາໄລບູລະພາ.

Chapin FS. (1997). Social participation and social intelligence. New York: Longman.

Cohen and Uphoff. (1997). Rural development participation:concept and measures for project desing implementtation and evolution and rural development committee center for international studies. New York: Longman.

Keith D.D. (1972). Human behavior at work-human relation and organization behavior. New Planner: New Planner.

Krejcie,R.V.,&Morgan,D.W. (1970). Determining sample size for research activities. Educational & Psychological Measurement,30.

Vroom and Deci. (1970). Vroom. V.H., &Deci, E.L Management and motivation. New York: Pengven book.

ຕາຕະລາງທີ1: ຄວາມໝາຍ ແລະ ຄະແນນສະເລ່ຍ

| ເກນຄ່າສະເລ່ຍ | ການຕີຄວາມໝາຍ |
|---|---|
| **4.51 – 5.00** | ລະດັບ ແລະ ແນວທາງການມີສ່ວນຮ່ວມ ຫຼາຍທີ່ສຸດ. |
| **3.51 – 4.50** | ລະດັບ ແລະ ແນວທາງການມີສ່ວນຮ່ວມ ຫຼາຍ. |
| **2.51 – 3.50** | ລະດັບ ແລະ ແນວທາງການມີສ່ວນຮ່ວມ ປານກາງ. |
| **1.51 – 2.50** | ລະດັບ ແລະ ແນວທາງການມີສ່ວນຮ່ວມ ນ້ອຍ. |
| **1.00 – 1.50** | ລະດັບ ແລະ ແນວທາງການມີສ່ວນຮ່ວມ ນ້ອຍທີ່ສຸດ. |

ຕາຕະລາງທີ2: ຄ່າສະເລ່ຍ ແລະ ຄ່າຟົ່ນປ່ຽນມາດຖານ ຄວາມຄິດເຫັນກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາໃນພາບລວມ.

(n=354)

| ລາຍການມີສ່ວນຮ່ວມ | ຄ່າສະເລ່ຍ ($\overline{X}$) | ຄ່າຟົ່ນປ່ຽນມາດຖານ ($SD$) | ລະດັບຄວາມຄິດເຫັນ |
|---|---|---|---|
| ການມີສ່ວນຮ່ວມສົ່ງເສີມວຽກງານວິຊາການ | 3.69 | 0.60 | ລະດັບຫຼາຍ |
| ການຄຸ້ມຄອງ ແລະ ປົກປັກຮັກສາໂຮງຮຽນ | 3.51 | 0.32 | ລະດັບຫຼາຍ |
| ການເຂົ້າຮ່ວມກິດຈະກຳເຄື່ອນໄຫວຕ່າງໆຂອງໂຮງຮຽນ | 3.74 | 0.70 | ລະດັບຫຼາຍ |
| ການບໍລິຫານງົບປະມານ | 3.50 | 0.42 | ລະດັບປານກາງ |
| ການວາງແຜນພັດທະນາໂຮງຮຽນ | 3.68 | 0.67 | ລະດັບຫຼາຍ |
| **ລວມ** | **3.62** | **0.54** | **ລະດັບຫຼາຍ** |

**ຕາຕະລາງທີ3:** ຜົນການປະເມີນແນວທາງ ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາກຸ່ມໂຮງຮຽນປະຖົມສຶກສາພາບລວມ ຂອງ 5 ແນວທາງ ເຊິ່ງສະແດງໃນຕາຕະລາງ (n=7)

| ລາຍການ | ຄວາມເໝາະສົມ | | | ຄວາມເປັນໄປໄດ້ | | |
|---|---|---|---|---|---|---|
| | ຄ່າສະເລ່ຍ | ຄ່າຟົ່ນປ່ຽນ | ລະດັບຄວາມເໝາະສົມ | ຄ່າສະເລ່ຍ | ຄ່າຟົ່ນປ່ຽນ | ລະດັບຄວາມເປັນໄປໄດ້ |
| 1. ການມີສ່ວນຮ່ວມສົ່ງເສີມວຽກງານວິຊາການ | 4.14 | 0.55 | ຫຼາຍ | 4.10 | 0.42 | ຫຼາຍ |
| 2. ດ້ານການຄຸ້ມຄອງ ແລະ ປົກປັກຮັກສາໂຮງຮຽນ. | 4.41 | 0.46 | ຫຼາຍ | 4.29 | 0.46 | ຫຼາຍ |
| 3. ການເຂົ້າຮ່ວມກິດຈະກຳເຄື່ອນໄຫວຕ່າງໆຂອງໂຮງຮຽນ. | 4.48 | 0.70 | ຫຼາຍ | 4.43 | 0.59 | ຫຼາຍ |
| 4. ການບໍລິຫານງົບປະມານ. | 4.46 | 0.67 | ຫຼາຍ | 4.45 | 0.68 | ຫຼາຍ |
| 5. ການວາງແຜນພັດທະນາໂຮງຮຽນ. | 4.45 | 0.63 | ຫຼາຍ | 4.43 | 0.62 | ຫຼາຍ |

| ລາຍການ | ຄວາມເໝາະສົມ | | | ຄວາມເປັນໄປໄດ້ | | |
|---|---|---|---|---|---|---|
| | ຄ່າສະເລ່ຍ | ຄ່າຝັນປ່ຽນ | ລະດັບຄວາມເໝາະສົມ | ຄ່າສະເລ່ຍ | ຄ່າຝັນປ່ຽນ | ລະດັບຄວາມເປັນໄປໄດ້ |
| **ລວມ** | **4.39** | **0.57** | **ຫຼາຍ** | **4.34** | **0.49** | **ຫຼາຍ** |